ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=== 000 ===----

ກະຊວງປ້ອງກັນຄວາມສະຫງົບ

ເລກທີ...799.../ປກສ

ນະຄອນຫຼວງວຽງຈັນ, ວັນທີ..13-6-12

# ແຈ້ງການ

ເຖິງ: ບັນດາກະຊວງ, ສຳນັກງານ, ອົງການຈັດຕັ້ງ, ແຂວງ, ນະຄອນ, ຫົວໜ່ວຍທຸລະກິດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໃນທົ່ວປະເທດ.

ເລື່ອງ: ການນຳເຂົ້າປືນ ແລະ ລູກປືນ ສຳລັບການກິລາ.

- ອີງຕາມ ກົດໝາຍວ່າດ້ວຍ ການປ້ອງກັນຄວາມສະຫງົບປະຊາຊົນ ສະບັບເລກທີ 03/ສພຊ, ລົງ ວັນທີ 2 ກໍລະກົດ 2007.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 79/ນຍ, ລົງວັນທີ 2 ກຸມພາ 2007.

- ອີງຕາມ ການສະເໜີຂອງກົມຍຸດໂທ ກົມໃຫຍ່ພະລາທິການປ້ອງກັນຄວາມສະຫງົບ ສະບັບເລກທີ..............., ລົງວັນທີ.........................

ເພື່ອຮັບປະກັນໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດລະບຽບການດັ່ງກ່າວໃຫ້ເຂັ້ມງວດ ແລະ ໄດ້ຮັບຜົນດີ.

## ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ອອກແຈ້ງການ ດັ່ງນີ້:

1. ການນຳເຂົ້າປືນ ແລະ ລູກປືນ ສຳລັບການກິລາ ທີ່ໄດ້ລະບຸໄວ້ໃນໝວດລະຫັດເຄົ້າ 93.03 ຂອງສາລະບານອັດຕາພາສີຂອງ ສປປລາວ ຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າ ຈາກກະຊວງປ້ອງກັນຄວາມສະຫງົບ.

2. ສະຫະພັນຍິງປືນແຫ່ງຊາດລາວມີສິດຂໍອະນຸຍາດນຳເຂົ້າປືນ ແລະ ລູກປືນສຳລັບການກິລາ ເທົ່ານັ້ນ.

3. ການພິຈາລະນາອອກໃບອະນຸຍາດນຳເຂົ້າປືນ ແລະ ລູກປືນ ສຳລັບການກິລາ ແມ່ນຂຶ້ນກັບການຕົກລົງຂອງ ກະຊວງປ້ອງກັນຄວາມສະຫງົບ ຊຶ່ງມີລາຍການດັ່ງນີ້:

3.1 ປືນກິລາທຸກປະເພດທີ່ມີລາຍການແຂ່ງຂັນຕາມກະຕິກາຂອງສະຫະພັນຍິງປືນສາກົນ, ສະຫະພັນຍິງປືນອາຊີ ແລະ ໂອແລມປິກສາກົນ.

+. ປືນສັ້ນອັດລົມປະເພດຕ່າງໆ ທີ່ມີຂະໜາດລຳກ້ອງ 4,5 ມມ ໄລຍະຍິງ10 ແມັດ ມີດັ່ງນີ້:

- ໄຟເອີບາວ;
- ອໍເຕີ້;
- ແຮມເມີລີ;
- ສະຕາມເອີ້;
- ປາດີນີ.

+. ປືນຍາວອັດລົມປະເພດຕ່າງໆ ທີ່ມີຂະໜາດລຳກ້ອງ 4,5 ມມ ໄລຍະຍິງ10 ແມັດ ມີດັ່ງນີ້:

- ໄຟເອີບາວ;
- ອັນຊຸດ;
- ອໍເຕີ້;
- ສະຕາມເອີ້.

+. ປືນສັ້ນ ,22 ທີ່ມີຂະໜາດລຳກ້ອງ 5,6 ມມ. ໄລຍະຍິງ 25 ແມັດ ມີດັ່ງນີ້:

- ໄຟເອີບາວ;
- ອັນຊຸດ;
- ອໍເຕີ້.

+. ປືນສັ້ນ ,22 ໄລຍະຍິງ 25 ແມັດ ມີດັ່ງນີ້:

- ຕ໋ອດ;
- ໂມດີ້ນີ;
- ປາດີນີ.

+. ປືນຍາວ ,22 ທີ່ມີຂະໜາດລຳກ້ອງ 4,5 ມມ. ໄລຍະຍິງ 50 ແມັດ ມີດັ່ງນີ້:

- ໄຟເອີບາວ;
- ອໍເຕີ້;
- ແຮມເມີລີ;
- ສະຕາມເອີ້.

+. ປືນສັ້ນ ແກັບກາງ ທີ່ມີຂະໜາດລຳກ້ອງ 7,62 ມມ ເຖິງ 9,62 ມມ.

+. ປືນລູກຊອງ ເບີ 12 ຊະນິດຕ່າງໆ ສຳລັບການແຂ່ງຂັນຍິງເປົ້າບິນ ມີດັ່ງນີ້:

- ບາເລດຕ້າ.
- ລູກປືນ ເບີ 12.

+. ປືນຍິງ I.P.S.C

- ວອດເຕີ ເບີ 99
- CZ SADOW
- STI
- INFINITY

+. ປືນຍາວ 300 ແມັດ.

3.2 ລູກປືນ.

- ລູກປືນອັດລົມ ສັ້ນ-ຍາວ;
- ລູກປືນ ,22 ສັ້ນ-ຍາວ;
- ລູກປືນ ,32;
- ລູກປືນ 99 ມມ;
- ລູກປືນ ,40;
- ລູກປືນ 38 ສຸບເປີ.

3.3 ອຸປະກອນເຕັກນິກຮັບໃຊ້ຂອງນັກກິລາຍິງປືນ, ກ້ອງສ່ອງທາງໄກ, ເຄື່ອງອັດຫູ, ແວ່ນຕາສຳລັບຍິງປືນ ແລະ ຊຸດເຄື່ອງແຂ່ງຂັນປືນ.

3.4 ອຸປະກອນ ເຕັກນິກຮັບໃຊ້ຢູ່ໃນສະໜາມຍິງປືນ.

ສຳລັບການນຳເຂົ້າປືນຍາວ ໄລຍະຄວາມແຮງຍິງບໍ່ໃຫ້ກາຍ 300 ແມັດ ແລະ ປືນສັ້ນ ໄລຍະຍິງຄວາມແຮງບໍ່ໃຫ້ກາຍ 50 ແມັດ ຖ້າກາຍແມ່ນຈະບໍ່ອະນຸຍາດໃຫ້ນຳເຂົ້າ.

4. ຂັ້ນຕອນຂໍອະນຸມັດນຳເຂົ້າປືນ ແລະ ລູກປືນສຳລັບການກິລາ ບັນດາສະຫະພັນກິລາຍິງປືນແຂວງ, ນະຄອນ, ອົງການທຸງບເທົ່າ ຕ້ອງໄດ້ເຮັດໜັງສືສະເໜີ ພ້ອມດ້ວຍບັນຊີລາຍການປືນ ແລະ ລູກປືນ ທີ່ຈະນຳເຂົ້ານຳສະເໜີຜ່ານກະຊວງສຶກສາທິການ-ກິລາ ແລະ ສະຫະພັນຍິງປືນແຫ່ງຊາດ ລາວ ມີຄຳເຫັນຢັ້ງຢືນ ແລ້ວຈຶ່ງນຳສະເໜີກະຊວງປ້ອງກັນຄວາມສະຫງົບ ພິຈາລະນາອະນຸມັດນຳເຂົ້າ.

5. ສະຫະພັນຍິງປືນແຫ່ງຊາດລາວເປັນຜູ້ຄຸ້ມຄອງກ່ຽວກັບປືນ-ລູກປືນສຳລັບການກິລາ ແລະ ອອກບັດປືນໃຫ້ນັກກິລາ ແລະ ມີຄວາມຮັບຜິດຊອບລາຍງານໃຫ້ກະຊວງປ້ອງກັນຄວາມສະຫງົບ ໃນແຕ່ລະໄລຍະ.

6. ມອບໃຫ້ກົມຄຸ້ມຄອງສຳມະໂນຄົວ-ກໍ່ສ້າງຮາກຖານ, ກົມຍຸດໂທ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຕິດຕາມກວດກາ ແລະ ຂຶ້ນບັນຊີທະບຽນຄຸ້ມຄອງກ່ຽວກັບການ

ນຳໃຊ້ປືນ ແລະ ລູກປືນສຳລັບການກິລາ, ພ້ອມທັງວັດຖຸເຄື່ອງອຸປະກອນສຳລັບການກິລາ ເພື່ອຮັບປະກັນໃນການນຳໃຊ້ໃຫ້ຖືກເປົ້າໝາຍ.

7. ຫ້ອງວ່າການກະຊວງ, ກົມໃຫຍ່ພະລາທິການ ແລະ ກົມຄຸ້ມຄອງສຳມະໂນຄົວ-ກໍ່ສ້າງຮາກຖານ ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການໃນການປະສານສົມທົບກັບທຸກພາກ ສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ສຳນັກງານ, ອົງການຈັດຕັ້ງ, ແຂວງ,ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ເມື່ອ ໄດ້ຮັບແຈ້ງການສະບັບນີ້ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

8. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ

ກະຊວງປ້ອງກັນຄວາມສະຫງົບ
ລັດຖະມົນຕີ

ດຣ. ທອງບັນ ແສງອາພອນ